ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

------xox------

<u>ສະພາລັດຖະມົນຕີ</u> / ລກທີ່ ໓໔໗ /ປສລ

# ມະຕິຕົກລົງ ຂອງສະພາລັດຖະມົນຕີ
# ກ່ຽວກັບການພິມ ຈຳໜ່າຍ ໃບຫວຍ ພັດທະນາ

------------------

໑/- ການເປີດຫວຍພັດທະນາ ແມ່ນແນ່ໃສ່ຈຸດປະສົງ ຍ່ອນອາລົມໃຫ້ປະຊາຊົນ, ລະດົມປະຊາຊົນທຸກຊັ້ນຄົນ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ແລະ ເກັບເອົາ ເງິນສົດສ່ວນໜຶ່ງຢູ່ໃນທ້ອງຕະຫລາດຄືນ.

ສະພາລັດຖະມົນຕີ ຕົກລົງພິມຈຳໜ່າຍ ໃບຫວຍ ພັດທະນາ ນັບແຕ່ໄຕມາດທີ ໑ ປີ ໑໙໘໓ ເປັນຕົ້ນໄປ.

໔/- ໃບຫວຍ ພັດທະນາ ແມ່ນກະຊວງການເງິນເປັນຜູ້ພິມ ແລະ ຈຳໜ່າຍເປັນເອກະພາບໃນທົ່ວປະເທດ. ນອກຈາກກະຊວງການເງິນແລ້ວ ບໍ່ອະນຸຍາດໃຫ້ອົງການສຳນັກງານ, ໂຮງຈັກໂຮງງານຫລືເອກະຊົນໃດໆ ມີສິດພິມ ຫຼື ຈຳໜ່າຍ ໃບຫວຍ ດັ່ງກ່າວໃນທົ່ວດິນແດນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ລາຄາໃບຫວຍທຸກປະເພດ, ກຳນົດໃຫ້ລາງວັນ, ການໃຊ້ຈ່າຍໃຫ້ກົງຈັກຄຸ້ມຄອງຫວຍ ແລະອັດຕາຄ່າເປີເຊັນໃຫ້ຕົວແທນຈຳໜ່າຍຂາຍໃບຫວຍນັ້ນ ແມ່ນລັດຖະມົນຕີກະຊວງການເງິນເປັນຜູ້ກຳນົດ.

໓/- ສ້າງຕັ້ງຄະນະກຳມະການ ຫວຍພັດທະນາ ໂດຍຂຶ້ນກັບກະຊວງການເງິນ. ຄະນະກຳມະການຫວຍພັດທະນາ ມີໜ້າທີ່:

- ພິມໃບຫວຍທຸກປະເພດ ຖືກຕາມແບບເປັນເອກະພາບ ແລະ ຈຳນວນໃບຫວຍ ທີ່ໄດ້ອະນຸມັດຈາກລັດຖະມົນຕີກະຊວງການເງິນ.
- ຈັດຕັ້ງອະນຸກຳມະການກຳກັບ ການອອກຫວຍພັດທະນາ ຢູ່ໃນພະແນກການເງິນແຂວງຫລື ພະແນກການເງິນກຳແພງນະຄອນ ແລະ ຕົວແທນຈຳໜ່າຍຂາຍ ໃບຫວຍ ເພື່ອຈຳໜ່າຍໃບຫວຍລົງ ເຖິງທຸກສຳນັກງານອົງການ, ໂຮງຈັກ ໂຮງງານ, ໂຮງຮຽນ, ໂຮງໝໍ, ນິຄົມກະເສດ, ສະຫະກອນ, ຕາແສງ ແລະ ບ້ານ.
- ຈັດຕັ້ງໝູນເລກລາງວັນ ແລະ ໃຫ້ລາງວັນ ຮອດມືຜູ້ທີ່ຖືກເລກຫວຍ.
- ຈັດຕັ້ງຄຸ້ມຄອງໃບຫວຍ ພັດທະນາ ຕາມລະບອບຄິດໄລ່ເສດຖະກິດ ແລະມອບເຂົ້າງົບປະມານຂອງລັດແຕ່ ໔໐-໖໐% ຂອງຕົວເລກຂາຍໃບຫວຍ, ສ່ວນລະດັບອັດຕາສ່ວນຕົວຈິງນັ້ນແມ່ນລັດຖະມົນຕີ

ກະຊວງການເງິນເປັນຜູ້ກຳນົດໃນແຕ່ລະໄລຍະ.

ໃນຈຳນວນລາຍຮັບດັ່ງກ່າວນີ້ ຕ້ອງແບ່ງ ໕໐ % ໃຫ້ງົບປະມານແຂວງ ຫລືກຳແພງນະຄອນ ແລະອີກ ໕໐ % ແມ່ນມອບເຂົ້າງົບປະມານສູນກາງ.

໔/- ຄະນະກຳມະການປົກຄອງ ແລະອົງການ ການເງິນທຸກຂັ້ນມີໜ້າທີ່:

- ໂຄສະນາ ອະທິບາຍ, ລະດົມປະຊາຊົນບັນດາຊັ້ນຄົນ ສະໜັບສະໜູນການພິມ ຈຳໜ່າຍໃບຫວຍພັດທະນາ.

- ກວດກາວຽກງານພິມ ແລະ ແຈກຢາກຂາຍ ໃບຫວຍ, ກວດກາການໝູນເລກລາງວັນ ແລະ ການໃຫ້ລາງວັນແກ່ຜູ້ຖືກເລກຫວຍ.

໕/- ຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບ ມີໜ້າທີ່ໂຄສະນາຂົນຂວາຍໃຫ້ແກ່ການພິມຈຳໜ່າຍ ໃບຫວຍພັດທະນາ, ປະກາດຜົນລາງວັນຕ່າງໆ ແລະ ແຈ້ງເລກຫວຍ ທີ່ໄດ້ຮັບລາງວັນລົງຮອດພື້ນຖານ.

ກະຊວງການເງິນສົມທົບກັບ ຄະນະກຳມະການ ທະນາຄານແຫ່ງລັດມີໜ້າທີ່ ແນະນຳລະອຽດກ່ຽວກັບການປະຕິບັດ ມະຕິຕົກລົງສະບັບນີ້.

ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ ໑໔ / ໑໔ / ໑໙໗໔

ປະທານສະພາລັດຖະມົນຕີ

ໄກສອນ ພົມວິຫານ